ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 247 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 02 ພະຈິກ 2026

ແຈ້ງການ

ເຖິງ: ຜູ້ທີ່ສົນໃຈຕ້ອງການສະໝັກສອບເສັງລະດັບຊາດສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7

ເລື່ອງ: ຂັ້ນຕອນການສະໝັກສອບເສັງລະດັບຊາດສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ການເຫັນດີ ແລະ ເປັນເອກະພາບຂອງ ຄະນະກຳມະການວິຊາຊີບພະຍາບານ ແລະ ຜະດຸງຄັນ.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາລະນະສຸກຈະຈັດການສອບເສັງລະດັບຊາດສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7, ຊຶ່ງຈະຈັດຂຶ້ນ ວັນທີ 21-22/11/2026 ທີ່ ຄະນະພະຍາບານສາດ ມອສ, ວິທະຍາໄລ ວິທະຍາສາດສຸຂະພາບ ຊຽງຂວາງ, ຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກ ແລະ ໂຮງຮຽນສາທາລະນະສຸກ ອຸດົມໄຊ, ວຽງຈັນ, ຄຳມ່ວນ ແລະ ສາລະວັນ. ດັ່ງນັ້ນ, ຈຶ່ງຂໍແຈ້ງໃຫ້ຜູ້ຮຽນທີ່ຈົບພະຍາບານ ແລະ ຜະດຸງຄັນທັງພາຍໃນ ແລະ ຕ່າງປະເທດ ທີ່ຮຽນຈົບແຕ່ ປີ 2020-2026 ຫຼື ພະຍາບານ ແລະ ຜະດຸງຄັນທີຍັງບໍ່ໄດ້ສອບເສັງ ແລະ ຮັບໃບປະກອບວິຊາຊີບພະຍາບານ ແລະ ຜະດຸງຄັນ ໃຫ້ສະໝັກສອບເສັງຊຶ່ງມີລາຍລະອຽດດັ່ງນີ້:

1. ດາວໂຫລດແບບຟອມຄຳຮ້ອງສະໝັກສອບເສັງໄດ້ທີ່: hpc.gov.la/la/nurse/examination;
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທຽນບຽນທາງອອນລາຍຜ່ານ QRcode ທີ່ມີຢູ່ທ້າຍແບບຟອມ (ຖ້າບໍ່ລົງທະບຽນອອນລາຍຈະບໍ່ມີລາຍຊື່ສອບເສັງ);
3. ສົ່ງຟອມຄຳຮ້ອງສະໝັກສອບ ແລະ ຮັບບັດເຂົ້າຫ້ອງສອບເສັງໄດ້ ທີ່ ຄະນະພະຍາບານສາດ ມອສ, ວິທະຍາໄລ ວິທະຍາ ສາດສຸຂະພາບ ຊຽງຂວາງ, ຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກ ແລະ ໂຮງຮຽນສາທາລະນະສຸກ ອຸດົມໄຊ, ວຽງຈັນ, ຄຳມ່ວນ ແລະ ສາລະວັນ ແຕ່ວັນທີ 02 ພະຈິກ 2026 ແລະ ປິດຮັບຟອມ ວັນທີ 18 ພະຈິກ 2026;
4. ສຳລັບ ວັນທີ ແລະ ເວລາ ຮັບບັດເຂົ້າຫ້ອງສອບເສັງໃຫ້ປະສານຫານຳສູນສອບເສັງທີ່ຕົນເອງສະໝັກ;
5. ຄ່າລົງທະບຽນສະໝັກສອບເສັງແມ່ນ 250,000 ກີບ/ຄົນ ຊຶ່ງຈະຕ້ອງຈ່າຍຕອນທີ່ສົ່ງຟອມຄຳຮ້ອງສະໝັກສອບເສັງ;
6. ໃນມື້ສອບເສັງໃຫ້ນັກສອບເສັງຜູ້ຊາຍນຸ່ງ ເສື້ອເຊີດສີຂາວ ແລະ ໂສ້ງຂາຍາວສີດຳ; ນັກສອບເສັງຜູ້ຍິງນຸ່ງ ເສື້ອເຊີດສີຂາວ ແລະ ສິ້ນ;
7. ຖ້າມີຂໍ້ສອບຖາມໃຫ້ປະສານຫາສູນສອບເສັງທີ່ຕົນຕ້ອງການສະໝັກສອບເສັງ.

ເຫັນດີ ປະທານ

ສຈ ດຣ ຈັນເພັງ ທຳມະວົງ